ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສຳນັກງານໃຫຍ່

ເລກທີ: 050 /ທຄຕລ.ສພບ.2025.
ນະຄອນຫຼວງວຽງຈັນ, ວັນທີ: 18 ກັນຍາ 2025.

**ບົດບັນທຶກ**

**ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025**

**ວັນທີ 05/09/2025**

ກອງປະຊຸມຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນສຸກ, ວັນທີ 05 ກັນຍາ 2025 ທີ່ຫ້ອງປະຊຸມ Grand ball Room, ໂຮງແຮມລາວພລາຊາ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ **ທ່ານ ສຸລິວັດ ສຸວັນນະຈູມຄຳ,** ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ **30** ທ່ານ, ຜູ້ມອບສິດຈຳນວນ **120** ທ່ານ ເຊິ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **779,784,250** ຮຸ້ນ, ນັບທັງ **3,690,685** ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ **75.079%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ **258,832,250** ຮຸ້ນ ເທົ່າກັບ **24.921%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ຄະນະປະທານໃນກອງປະຊຸມ ປະກອບມີ:**

1. ທ່ານ ສຸລິວັດ ສຸວັນນະຈູມຄຳ, ປະທານສະພາບໍລິຫານ, ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ປອ ອາຄົມ ປຣະເສີດ, ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານອິດສະຫຼະ.
3. ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ, ສະມາຊິກສະພາບໍລິຫານ;
4. ທ່ານ ປະສົມເພັດ ຄຳຕັນ, ສະມາຊິກສະພາບໍລິຫານ;
5. ທ່ານ ຣສຈ. ທອງເພັດ ຈັນທະນິວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
6. ທ່ານ ສອນໄຊ ສີລາເພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
7. ທ່ານ ນ. ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.
8. ທ່ານ ມິກາແອລ ເດີ ແກຼກ, ຜູ້ຕາງໜ້າສະມາຊິກສະພາບໍລິຫານຈາກຂາຮຸ້ນຍຸດທະສາດ;
9. ທ່ານ ນ. ບຸນຕາ ດາຣາວີ, ເປົ້າໝາຍແຕ່ງຕັ້ງເປັນຮອງປະທານສະພາບໍລິຫານຜູ້ໃໝ່;

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:**

**ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຫຍໍ້ເນື້ອໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ຂອງ ທຄຕລ ສະໄໝສາມັນ ປະຈຳປີ 2024 ຈັດຂຶ້ນໃນວັນທີ 30/04/2025 ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມພິຈະນາ ແລະ ຮັບຮອງເອົາບົດບັນທຶກດັ່ງກ່າວ.

(ຄັ້ງນີ້ ທຄຕລ ເຮັດວຽກດ້ານນັກລົງທຶນສຳພັນຮ່ວມກັນກັບຫຼາຍໜ່ວຍງານທັງໃນ ແລະ ຕ່າງປະເທດລວມເຖິງເຈົ້າຂອງພາສາ)

**ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງໃນວາລະນີ້ ບໍ່ມີຄຳຖາມ/ຄຳເຫັນ ຈາກກອງປະຊຸມ**

**ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**

- ເຫັນດີຈຳນວນ: **779,758,250** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 02: ພິຈາລະນາ ແລະ ຮັບຮອງການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈຳປີ 2025**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ສະເໜີກອງປະຊຸມຮັບຮອງ ເອົາການດັດແກ້ແຜນ ປະຈຳປີ 2025 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ດັ່ງນີ້:

- **ຍອດຊັບສິນ:** ດັດແກ້ໃໝ່ ເປັນບໍ່ຫຼຸດ **157,000** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **10.41%;**
- **ຍອດເງິນຝາກ:** ດັດແກ້ໃໝ່ ເປັນບໍ່ຫຼຸດ **145,000** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **8.91%;**
- **ກຳໄລສຸດທິ:** ດັດແກ້ໃໝ່ເປັນບໍ່ຫຼຸດ **576** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **28.12%;**
- **ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ:** ດັດແກ້ ໃໝ່ເປັນ **832.54** ຕື້ກີບ, ເພີ່ມຂຶ້ນຈຳນວນ **27.87** ຕື້ກີບ ເພື່ອປະກອບເຂົ້າໃນໜ້າວຽກຫຼັກຄື: ວຽກ Artificial Intelligence (AI), AI Face Recognition ແລະ Cyber Security.

ສຳລັບຕົວເລກຕາມແຜນ ປີ 2025 ທີ່ຍັງຮັກສາຕົວເລກເດີມປະກອບມີ:

- **ຍອດສິນເຊື່ອທັງໝົດ:** ຮັກສາຕົວເລກຕາມແຜນເດີມບໍ່ຫຼຸດ ຈຳນວນ 65,700 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ຮັກສາຕົວເລກຕາມແຜນເດີມ ບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ;

**ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງໃນວາລະນີ້ ບໍ່ມີຄຳຖາມ/ຄຳເຫັນ ຈາກກອງປະຊຸມ**

**ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**

- ເຫັນດີຈຳນວນ: **779,758,250** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 03: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ທຄຕລ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ,** ຜູ້ອຳນວຍການ ທຄຕລ ສະເໜີກອງປະຊຸມ ຮັບຮອງເອົາການແຕ່ງຕັ້ງຜູ້ໄດ້ຮັບການຄັດເລືອກ **ທ່ານ ນ. ບຸນຕາ ດາຣາວີ** ເປັນຮອງປະທານສະພາບໍລິຫານ ທຄຕລ ຜູ້ໃໝ່ ຕາມຂໍ້ຕົກລົງສະບັບເລກທີ 1523/ກງ, ລົງວັນທີ 20/05/2025, ເພື່ອປ່ຽນແທນ **ທ່ານ ປອ ອາຄົມ ປຣະເສີດ** ທີ່ໄດ້ສິ້ນສຸດອາຍຸການເປັນຮອງປະທານສະພາບໍລິຫານ.

**ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງໃນວາລະນີ້ ບໍ່ມີຄຳຖາມ/ຄຳເຫັນ ຈາກກອງປະຊຸມ**

**ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**

- ເຫັນດີຈຳນວນ: **779,758,250** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 04: ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ສະເໜີກອງປະຊຸມ ຮັບຮອງການແຕ່ງຕັ້ງ **ທ່ານ ມິກາແອລ ເດີ ແກຼກ** ເປັນສະມາຊິກສະພາບໍລິຫານ ທຄຕລ ຜູ້ໃໝ່ ຕາມໜັງສືແຕ່ງຕັ້ງຈາກຂາຮຸ້ນຍຸດທະສາດ **COFIBRED**, ເພື່ອປ່ຽນແທນ **ທ່ານ ອາໂນ ເດໂລເນ.**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງໃນວາລະນີ້ ບໍ່ມີຄຳຖາມ/ຄຳເຫັນ ຈາກກອງປະຊຸມ

**ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:**

- ເຫັນດີຈຳນວນ: **779,758,250** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງການຮັບຮອງໃນຄັ້ງນີ້ ຈະເຮັດໃຫ້ສະພາບໍລິຫານຂອງ ທຄຕລ ຊຸດໃໝ່ ປະກອບດ້ວຍ **08** ທ່ານ ດັ່ງນີ້:

1. ທ່ານ ສຸລິວັດ ສຸວັນນະຈູມຄຳ — ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ;
2. ທ່ານ ນ. ບຸນຕາ ດາຣາວີ — ສະມາຊິກອິດສະລະ, ຮອງປະທານສະພາບໍລິຫານ

3. ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ, ສະມາຊິກສະພາບໍລິຫານ
4. ທ່ານ ປະສົມເຜັດ ຄຳຕັນ ສະມາຊິກສະພາບໍລິຫານ
5. ທ່ານ ມິກາແອລ ເດີ ແຖຼກ ສະມາຊິກສະພາບໍລິຫານ
6. ທ່ານ ຣສ. ທອງເຜັດ ຈັນທະນິວົງ ສະມາຊິກສະພາບໍລິຫານອິດສະລະ
7. ທ່ານ ນ. ລັດດາວັນ ຊີງວິໄລ ສະມາຊິກສະພາບໍລິຫານອິດສະລະ
8. ທ່ານ ສອນໄຊ ສີລາເພັດ ສະມາຊິກສະພາບໍລິຫານອິດສະລະ

**ໃນຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ສາມາດມີຄຳຖາມ ແລະ ຂໍ້ສະເໜີເພີ່ມເຕີມ ເຊິ່ງມີລາຍລະອຽດດັ່ງນີ້**:

1) **ທ່ານ ຄຳໄຊ ບຸນມີສີດາວົງ:** ສະແດງຄວາມຍິນດີກັບທ່ານຮອງປະທານສະພາບໍລິຫານ ແລະ ຄະນະສະພາບໍລິຫານຊຸດໃໝ່ທີ່ໄດ້ຮັບການຮັບຮອງ, ອີງໃສ່ຕົວເລກແຜນທຸລະກິດ ທຄຕລ ປະຈຳປີ **2025** ທີ່ດັດແກ້ໃໝ່ ເຫັນວ່າ ມີຫຼາຍດ້ານແມ່ນມີລັກສະນະເພີ່ມຂຶ້ນ ລວມທັງການເພີ່ມຂຶ້ນຂອງກຳໄລສຸດທິ ແລະ ການເພີ່ມທຶນຈົດທະບຽນ. ສະນັ້ນ, ຈຶ່ງຂໍສະເໜີໃຫ້ທ່ານພິຈາລະນາເງິນປັນຜົນໃຫ້ຜູ້ຖືຮຸ້ນສູງຂຶ້ນຕາມການປັບປຸງແຜນທຸລະກິດ;
2) **ທ່ານ ກ້ຽງກະຕ່າຍ ສີວົງສາ**: ຂໍສະແດງຄວາມຊົມເຊີຍນຳທ່ານ **ນ. ບຸນຕາ ດາຣາວົ,** ຮອງປະທານສະພາບໍລິຫານຄົນໃໝ່ ແລະ ຂໍຟັງວິໄສທັດຂອງທ່ານ ໃນການນຳພາບໍລິຫານ ທຄຕລ;
3) **ທ່ານ Im Souvanrith** ຕາງໜ້າທະນາຄານແຄນນາເດຍ ຖາມກ່ຽວກັບແຜນເພີ່ມທຶນຈົດທະບຽນ ແມ່ນຈະເພີ່ມຕົວຈິງເທົ່າໃດ? ແລະ ອັດຕາສ່ວນເງິນປັນຜົນຮຸ້ນຈະເປັນເທົ່າເມື່ອມີການເພີ່ມທຶນໃໝ່?

**ຄຳເຫັນຈາກຄະນະປະທານ ກອງປະຊຸມ**:

- **ທ່ານ ສຸລິວັດ ສຸວັນນະຈູມຄຳ**:
  - ຄະນະບໍລິຫານ ທຄຕລ ມີຄວາມພະຍາຍາມ, ເອົາໃຈໃສ່ໃນການພັດທະນາປັບປຸງ ທຄຕລ ຫຼາຍດ້ານເພື່ອເຮັດໃຫ້ຜົນການດຳເນີນທຸລະກິດໃຫ້ດີຂຶ້ນ. ໃນນັ້ນ, ການເພີ່ມທຶນຈົດທະບຽນກໍເປັນອີກວິທີໜຶ່ງເພື່ອເຮັດໃຫ້ ທຄຕລ ມີຄວາມເຂັ້ມແຂງດ້ານການເງິນ ແລະ ໄດ້ຕາມມາດຕະຖານຂອງ ທຫລ ກຳນົດໄວ້. ສຳລັບແຜນເພີ່ມທຶນຂຶ້ນເປັນຈຳນວນເທົ່າໃດ ແມ່ນທ່ານຜູ້ອຳນວຍການ ທຄຕລ ຈະເປັນຜູ້ລາຍງານຕື່ມ ເຊິ່ງປະຕິບັດຕາມລະບຽບທີ່ກ່ຽວຂ້ອງ;
  - ອີງໃສ່ການປັບປຸງແຜນທຸລະກິດໃໝ່ ແມ່ນໄປໃນທິດທາງທີ່ດີຂຶ້ນ ແລະ ແຜນກຳໄລສຸດທິກໍເພີ່ມຂຶ້ນທຽບໃສ່ໄລຍະດຽວກັນປີຜ່ານມາ. ສະນັ້ນ, ການປັບປຸງບັນດາຕົວເລກແຜນຄາດໝາຍຕ່າງໆ ແລະ ການເພີ່ມທຶນຈົດທະບຽນ ແມ່ນຈະເຮັດໃຫ້ ທຄຕລ ມີຄວາມອາດສາມາດທີ່ຈະຈ່າຍເງິນປັນຜົນສູງຂຶ້ນທຽບໃສ່ປີຜ່ານມາ ແລະ ທຄຕລ ກໍຈະພະຍາຍາມສູ້ຊົນໃຫ້ທຸລະກິດມີທ່າກ້າວທີ່ດີຂຶ້ນໃນປີຕໍ່ໆໄປ;
  - ການແຕ່ງຕັ້ງຮອງປະທານສະພາບໍລິຫານຄົນໃໝ່ ແມ່ນເປັນຜູ້ທີ່ມີປະສົບການ ແລະ ມີບົດຮຽນດ້ານທະນາຄານສູງ ພ້ອມທັງສົມທົບກັບຄະນະສະພາ ແລະ ຄະນະບໍລິຫານງານ ທຄຕລ ໃນປັດຈຸບັນທີ່ມີປະສິດທິຜົນຢູ່ແລ້ວ ໂດຍສະເພາະໄດ້ມີການສະສົມບົດຮຽນ, ປະສົບການຫຼາກຫຼາຍໃນຂັ້ນມະຫາພາກ, ບັນດາລະບຽບການຕ່າງໆທີ່ອອກມາ, ມີການປະສານສົມທົບກັບ ທຫລ, ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຊິ່ງເປັນຂອດໜຶ່ງຈະສາມາດຊ່ວຍໃຫ້ ທຄຕລ ມີຄວາມເຂັ້ມແຂງຂຶ້ນຕື່ມ. ພ້ອມນີ້, ບົນພື້ນຖານການຊຸກຍູ້ຂອງລູກຄ້າ ແລະ ບັນດາຜູ້ຖືຮຸ້ນ ແມ່ນຈະຊ່ວຍໃຫ້ຜົນດຳເນີນທຸລະກິດຂອງ ທຄຕລ ມີການປັບຕົວດີຂຶ້ນ ແລະ ຄະນະສະພາບໍລິຫານ ສັນຍາວ່າຈະສ້າງຜົນຕອບແທນໃຫ້ຜູ້ຖືຮຸ້ນສູງຂຶ້ນກວ່າປີຜ່ານມາ.

- **ທ່ານ ນ. ສາຍສະໜອນ ຈັນທະຈັກ**:
  - ຕໍ່ກັບການສະເໜີຂອງຜູ້ຖືຮຸ້ນ ໃຫ້ ທຄຕລ ມີການຈ່າຍເງິນປັນຜົນຫຼາຍຂຶ້ນຕາມການປັບປຸງຕົວເລກທີ່ເພີ່ມຂຶ້ນ ເຊິ່ງໃນນາມຜູ້ບໍລິຫານ ທຄຕລ ຈະພະຍາມເຕັມທີ່ເພື່ອເຮັດໃຫ້ຜົນຕອບແທນຕໍ່ຜູ້ຖືຮຸ້ນເພີ່ມສູງຂຶ້ນກວ່າປີຜ່ານມາ ເຊິ່ງເປັນໜຶ່ງໃນຄາດໝາຍສູ້ຊົນຂອງຄະນະບໍລິຫານງານທັງໝົດ ເພື່ອໃຫ້ຜູ້ຖືຮຸ້ນ ທຄຕລ ໄດ້ຮັບຜົນຕອບແທນທີ່ສູງໃນແຕ່ລະປີ ໂດຍອີງໃສ່ຜົນການດໍາເນີນທຸລະກິດຂອງ ທຄຕລ ທີ່ມີລັກສະນະເພີ່ມຂຶ້ນເປັນກ້າວໆມາ ແລະ ບາງໄລຍະຜົນດໍາເນີນທຸລະກິດກໍມີຄວາມກ້າວກະໂດດ ເຊິ່ງເປັນຄວາມພະຍາຍາມສູ້ຊົນຂອງຄະນະບໍລິຫານງານທຸກທ່ານ ແລະ ພະນັກງານທົ່ວລະບົບ ເພື່ອໃຫ້ການດໍາເນີນທຸລະກິດໄປໃນທິດທາງທີ່ດີຂຶ້ນ, ມີການປັນຜົນເພີ່ມຂຶ້ນ ໂດຍປະຕິບັດຕາມການໃຫ້ສັນຍາຕໍ່ກັບຜູ້ຖືຮຸ້ນ ທຄຕລ ໃນໄລຍະຜ່ານມາ. ສໍາລັບຈໍານວນການເບີກຈ່າຍເງິນປັນຜົນເທົ່າໃດນັ້ນ ແມ່ນຍັງບໍ່ທັນສາມາດເປີດເຜີຍໄດ້ໃນຕອນນີ້ ດ້ວຍເຫດຜົນທີ່ຈະບໍ່ສອດຄ່ອງກັບລະບຽບການວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ.
  - ສໍາລັບແຜນການເພີ່ມທຶນຈົດທະບຽນເບື້ອງຕົ້ນຕາມການລາຍງານ ໃນກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2024 ຄັ້ງວັນທີ 30/04/2025 ຄາດວ່າຈະເພີ່ມ 1,120 ຕື້ກີບ. ໃນນັ້ນ, ແຜນເພີ່ມທຶນຂອງກະຊວງການເງິນແມ່ນ 672 ຕື້ກີບ ເພື່ອເຮັດໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ (CAR) ໃຫ້ສູງກວ່າ 8% ຕາມຂໍ້ກໍານົດຂອງທະນາຄານແຫ່ງ ສປປ ລາວ. ແຕ່ໃນການຈັດຕັ້ງປະຕິບັດຕົວຈິງ ແລະ ອີງໃສ່ຫຼາຍເງື່ອນໄຂ ທາງກະຊວງການເງິນໄດ້ເອກະພາບເພີ່ມທຶນໃຫ້ ທຄຕລ ຈໍານວນ 500 ຕື້ກີບ ແລະ ຮັກສາອັດຕາສ່ວນຜູ້ຖືຮຸ້ນລາຍໃຫຍ່ຢູ່ໃນລະດັບ 60%. ສະນັ້ນ, ໃນປັດຈຸບັນ, ທຄຕລ ກໍາລັງຢູ່ໃນຂັ້ນຕອນດໍາເນີນງານການເພີ່ມທຶນຈົດທະບຽນ (ຈໍານວນ 833 ຕື້ກີບ) ແລະ ໄດ້ມີການເຜີຍແຜ່ການສະເໜີອອກຈໍາໜ່າຍຮຸ້ນສາມັນເພື່ອເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ (RO/PO) ຜ່ານເວັບໄຊຕະຫຼາດຫຼັກຊັບ ແລະ ເວັບໄຊຂອງ ທຄຕລ. ເຖິງຢ່າງໃດກໍຕາມ, ຈໍານວນຮຸ້ນທີ່ເພີ່ມຂຶ້ນກໍອາດມີຜົນຕໍ່ອັດຕາສ່ວນກໍາໄລສຸດທິຕໍ່ຮຸ້ນ (EPS) ແຕ່ ທຄຕລ ກໍຈະພະຍາຍາມສ້າງຜົນຕອບແທນຜູ້ຖືຮຸ້ນໃຫ້ໄດ້ຫຼາຍທີ່ສຸດ.
  - ດ້ານຂະບວນການເພີ່ມທຶນຄາດວ່າຈະສໍາເລັດໃນຊ່ວງທ້າຍປີ 2025 ຫຼັງຈາກນັ້ນ ທຄຕລ ຈຶ່ງສາມາດນໍາໃຊ້ທຶນດັ່ງກ່າວເຂົ້າໃນການດໍາເນີນທຸລະກິດໄດ້ ເຊິ່ງຍັງມີເວລາບໍ່ຫຼາຍຫາທ້າຍປີ ໃນການສ້າງລາຍຮັບເພີ່ມທີ່ໄດ້ຈາກການເພີ່ມທຶນຈົດທະບຽນໃໝ່. ຈາກສະພາບຄືດັ່ງກ່າວນັ້ນ, ຂໍໃຫ້ຜູ້ຖືຮຸ້ນທຸກທ່ານຮັບຊາບ ແລະ ເຂົ້າໃຈ.
  - ການດັດແກ້ແຜນກໍາໄລສຸດທິ ເດີມ 550 ຕື້ກີບ ເປັນ 576 ຕື້ກີບ ທຽບໃສ່ການເພີ່ມທຶນຈົດທະບຽນ ອາດເຮັດໃຫ້ສັດສ່ວນການເພີ່ມຂຶ້ນກໍາໄລບໍ່ສູງ ເນື່ອງຈາກວ່າແຜນໃນເບື້ອງຕົ້ນ ທຄຕລ ແມ່ນໄດ້ຄໍານວນການເພີ່ມທຶນຈົດທະບຽນຈໍານວນ 1,120 ຕື້ກີບ ແຕ່ການເພີ່ມທຶນຕົວຈິງແມ່ນ 833 ຕື້ກີບ ເຊິ່ງການປັບປຸງແຜນກໍາໄລສຸດທິທີ່ເພີ່ມຂຶ້ນເປັນ 576 ຕື້ກີບ ເຫັນວ່າຢູ່ໃນລະດັບທີ່ຂ້ອນຂ້າງດີແລ້ວອີງໃສ່ການປະເມີນໄລ່ລຽງຄືນຜົນການດໍາເນີນທຸລະກິດ ທຄຕລ.
- **ທ່ານ ນ. ບຸນຕາ ດາຣາວີ**: ຂ້າພະເຈົ້າມີຄວາມພາກພູມໃຈທີ່ໄດ້ຮັບຄວາມເຊື່ອໃຈຈາກຂັ້ນເທິງ ແລະ ຜູ້ຖືຮຸ້ນ ໃຫ້ມາຮັບຕໍາແໜ່ງເປັນຮອງປະທານສະພາບໍລິຫານ ຄົນໃໝ່ ຂອງ ທຄຕລ, ຖືວ່າເປັນວຽກທີ່ທ້າທາຍຂອງພະນັກງານບໍານານ, ຂ້າພະເຈົ້າຈະພະຍາຍາມທຸ້ມເທໃນການປະຕິບັດພາລະກິດ ໂດຍນໍາເອົາຄວາມຮູ້, ຄວາມສາມາດທີ່ມີ ໃນຂົງເຂດທະນາຄານ ຮ່ວມກັບຄະນະສະພາບໍລິຫານທ່ານອື່ນ ເພື່ອນໍາພາ ທຄຕລ ໃຫ້ມີຄວາມຕັ້ງໜ້າຂຶ້ນຕື່ມອີກ;

**ຄຳເຫັນເພີ່ມຕື່ມຈາກຄະນະສະພາບໍລິຫານ:**

- ***ທ່ານ ນ. ສາຍສະໝອນ ຈັນທະຈັກ:*** ສະແດງຄວາມຂອບໃຈຕໍ່ຜູ້ຖືຮຸ້ນລາຍໃຫຍ່ ກໍຄືກະຊວງການເງິນ, ການແຕ່ງຕັ້ງຮອງປະທານສະພາບໍລິຫານຄົນໃໝ່ ເພື່ອປະກອບສ່ວນເຂົ້າໃນການຊີ້ນຳ-ນຳພາ ການດຳເນີນທຸລະກິດຂອງ ທຄຕລ. ເຖິງແມ່ນວ່າທ່ານບໍ່ໄດ້ປະຈຳການແລ້ວ ແຕ່ກໍເຊື່ອໝັ້ນວ່າ ສາມາດຂຸດຄົ້ນເອົາທ່າແຮງ ແລະ ປະສົບການຂອງທ່ານມາປະກອບສ່ວນເຂົ້າໃນການບໍລິຫານ ເຊິ່ງເປັນທ່າແຮງໃນການພັດທະນາ ທຄຕລ. ໃນຖານະທ່ານເປັນກຳມະການອິດສະຫຼະ ແມ່ນຈະໄດ້ມຸມມອງຈາກພາຍນອກຕື່ມໃນການປັບປຸງພາຍໃນ. ເຖິງແມ່ນວ່າ ຈະມີການປັບປ່ຽນຄະນະບໍລິຫານ ແຕ່ສິ່ງສຳຄັນ ທຄຕລ ແມ່ນມີບ່ອນອີງທີ່ເປັນພື້ນຖານໃນການດຳເນີນທຸລະກິດ ໂດຍສະເພາະແມ່ນແຜນຍຸດທະສາດພັດທະນາ ເຊິ່ງໄດ້ມີການຮັບຮອງແລ້ວ ການເຄື່ອນໄຫວທຸລະກິດໃນແຕ່ລະດ້ານ ແມ່ນໄດ້ລວມໃນຍຸດທະສາດ ທຄຕລ. ສະນັ້ນ, ຈຶ່ງຂໍໃຫ້ຜູ້ຖືຮຸ້ນເຊື່ອໝັ້ນການບໍລິຫານຂອງ ທຄຕລ;
- ***ທ່ານ ສຸລິອັດ ສຸອັນນະຈູມຄຳ:*** ການບໍລິຫານ ທຄຕລ ແມ່ນຢູ່ບົນພື້ນຖານມີຍຸດທະສາດໄລຍະກາງ ແລະ ໄລຍະຍາວ ເພື່ອເຮັດໃຫ້ການດຳເນີນທຸລະກິດ ຂອງ ທຄຕລ ມີການປັບປຸງໃຫ້ດີຂຶ້ນ ແລະ ມີການພັດທະນາຢ່າງມີຈຸດສຸມ. ສະນັ້ນ, ໃຫ້ບັນດາທ່ານຈຶ່ງມີຄວາມເຊື່ອໝັ້ນຕໍ່ແຜນການນຳພາຂອງ ທຄຕລ ໃນການດຳເນີນທຸລະກິດ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ **16:15** ໂມງ ຂອງວັນດຽວກັນ.

**ປະທານກອງປະຊຸມ** | **ຜູ້ບັນທຶກ**

**ທ່ານ ສຸລິອັດ ສຸອັນນະຈູມຄຳ** | **ພອນນະລັດ ກອງອິ້ງສາ**